ຜົນກະທົບຈາກການຂະຫຍາຍເນື້ອທີ່ປູກສາລີ ຕໍ່ກັບເສດຖະກິດ ຄອບຄົວ ແລະ ລະບົບການຜະລິດ

ກໍລະນີສຶກສາເມືອງຊຽງຄໍ້ ແຂວງຫົວພັນ ແລະ ເມືອງຄຳ, ເມືອງໜອງແຮດ ແຂວງຊຽງຂວາງ

ອານຸສິດ ແກ້ວໂພໂຊ[1,2], Julien Viau[2], Etienne Jobard[2], Guillaume Lestrelin[2,3], Jean-Christophe Castella[2,3]

ບົດຄັດຫຍໍ້

ໃນຊຸມປີຜ່ານມາ, ຊາວກະສິກອນໃນເຂດຫ່າງໄກສອກຫຼີກຢູ່ທາງພາກເໜືອຂອງລາວຖືເອົາການປູກເຂົ້າພຽງແຕ່ເພື່ອການບໍລິໂພກພາຍໃນຄອບຄົວເທົ່ານັ້ນ, ເຫຼືອຈາກການບໍລິໂພກຈຶ່ງນຳໄປແລກປ່ຽນ ຫຼື ຂາຍເປັນສິນຄ້າຢູ່ຕາມທ້ອງຕະຫຼາດ. ຊາວກະສິກອນທີ່ອາໄສຢູ່ໃນເຂດພູດອຍຈະມີການປູກພືດສຳຮອງມາຕັ້ງແຕ່ດັ້ງເດີມ ເຊັ່ນ: ມັນຕົ້ນ ແລະ ສາລີ ເພື່ອນຳໃຊ້ເຂົ້າໃນການລ້ຽງສັດນ້ອຍ. ການຜະລິດກະສິກຳຢູ່ເຂດພູດອຍຄ່ອຍໆ ມີການຫັນປ່ຽນຈາກການຜະລິດພໍແຕ່ກຸ້ມຢູ່ກຸ້ມກິນມາຜະລິດເປັນສິນຄ້ານັບມື້ນັບຫຼາຍຂຶ້ນ ເປັນຕົ້ນແມ່ນການທີ່ປູກສາລີພັນ ໄດ້ຂະຫຍາຍຢ່າງໄວ ວາ ເນື່ອງຈາກເປັນກົດຈະກຳໜຶ່ງທີ່ສຳຄັນໃນການປ່ຽນແປງລະບົບການຜະລິດ ທັງເປັນການເພີ່ມລາຍຮັບໃຫ້ຊາວກະສິກອນພາຍໃນທ້ອງຖິ່ນ.

ໃນປີ 2009-2010 ທາງທີມງານໄດ້ສຶກສາການປ່ຽນແປງທາງພື້ນທີ່ພູມີສາດ ແລະ ລະບົບການດຳລົງຊີວິດ ທີ່ມີຜົນຕໍ່ກັບການຂະຫຍາຍເນື້ອທີ່ປູກສາລີໃນ ເມືອງຊຽງຄໍ້, ແຂວງຫົວພັນ ແລະ ເມືອງຄຳ, ເມືອງໜອງແຮດ, ແຂວງຊຽງຂວາງ. ອີງຕາມນະໂຍບາຍລັດຖະບານ ທີ່ໄດ້ຊຸກຍູ້ການຜະລິດສາລີໃນບັນດາເມືອງຕ່າງໆ ເພື່ອສົ່ງອອກສູ່ປະເທດຫວຽດນາມ. ການສຶກສາສະແດງໃຫ້ເຫັນວ່າຫຼາຍຄອບຄົວໄດ້ປູກສາລີເປັນສິນຄ້າ, ຕາມສະພາບພື້ນຖານເສດຖະກິດຂອງຄອບຄົວ. ຄຽງຄູ່ກັບການຂະຫຍາຍເນື້ອທີ່ປູກສາລີ ກໍ່ຍັງເຮັດໃຫ້ສະພາບພື້ນທີ່ມີການປ່ຽນແປງ, ເນື່ອງຈາກພື້ນທີ່ການປູກສາລີໄດ້ເຂົ້າມາປ່ຽນແທນພື້ນທີ່ການເຮັດໄຮ່ໃນເຂດຮ່ອມພູ ແລະ ຂະຫຍາຍກວ້າງຂຶ້ນໄປຫາເຂດເທິງພູສູງນຳອີກ. ການວິເຄາະທາງດ້ານເສດຖະກິດສະແດງໃຫ້ເຫັນວ່າການປູກສາລີໄດ້ກາຍ ເປັນປັດໄຈຫຼັກໃນການສ້າງລາຍຮັບໃຫ້ຊາວກະສິກອນ. ຄຽງຄູ່ກັບຈຸດເດັ່ນເຫຼົ່ານັ້ນ, ການຂະຫຍາຍເນື້ອທີ່ປູກສາລີກໍ່ຍັງສົ່ງຜົນກະທົບຕໍ່ສະພາບແວດລ້ອມໃນບາງເຂດ ໂດຍສະເພາະ ຊາວກະສິກອນໃນ ເມືອງ ຊຽງຄໍ້ ທີ່ໄດ້ເລີ່ມສູນເສຍພື້ນທີ່ປ່າເຫຼົ່າ ຫຼື ເຮັດໃຫ້ພື້ນທີ່ທີ່ເໝາະສົມ ແກ່ການປູກສາລີເຊື່ອມໂຊມໄປເທື່ອລະໜ້ອຍ (ການສູນເສຍຄວາມອຸດົມສົມບູນຂອງດິນ ແລະ ເກີດມີດິນເຊາະເຈື່ອນ) ທີ່ເຮັດໃຫ້ຜົນຜະລິດຫຼຸດລົງ. ເຖິງແມ້ວ່າ, ຊາວກະສິກອນຮູ້ວ່າຜົນຜະລິດເລີ່ມຫຼຸດລົງແຕ່ພວກເຂົາບໍ່ຮູ້ຈະຊອກຫາແນວທາງໃດເພື່ອ

ປັບປຸງ, ເຂົາເຈົ້າຈຶ່ງສືບຕໍ່ປະຕິບັດຮູບແບບການຜະລິດແບບດັ້ງເດີມ. ແຕ່ຊາວກະສິກອນພາຍໃນແຂວງ ຊຽງຂວາງສ່ວນໃຫຍ່ ໄດ້ຫັນມານຳໃຊ້ເຄື່ອງຈັກເຂົ້າຊ່ວຍໃນການໄຖເພື່ອກະກຽມດິນ ແລະ ນຳ ໃຊ້ຢາຂ້າຫຍ້າ ຊຶ່ງການປ່ຽນແປງເຫຼົ່ານີ້ອາດຈະເກີດຂຶ້ນໃນເມືອງຊຽງຄໍ້ເຊັ່ນດຽວກັນໃນໄວໆນີ້. ການ ຂະຫຍາຍເນື້ອທີ່ປູກສາລີ ໄດ້ສ້າງຜົນກະທົບຢ່າງໃຫຍ່ຫຼວງຕໍ່ກັບຊາວກະສິກອນບໍ່ວ່າຈະເປັນຜົນກະ ທົບທາງດ້ານບວກ ແລະ ດ້ານລົບ. ເຊິ່ງອາດຈະມີຄວາມແຕກຕ່າງກັນໄປຕາມການ ເພີ່ມຂຶ້ນຂອງ ປະຊາກອນ ແລະ ການປ່ຽນແປງເຄືອຂ່າຍທາງສັງຄົມຈາກພໍ່ຄ້າຄົນກາງ. ການແຜ່ຂະຫຍາຍສິນ ເຊື່ອສຳລັບການຜະລິດກະສິກຳ ແລະ ຄວາມບໍ່ໝັ້ນຄົງຂອງລາຄາຜົນຜະລິດໄດ້ສົ່ງຜົນເຮັດໃຫ້ເສດ ຖະກິດ ແລະ ສະພາບແວດລ້ອມມີການປ່ຽນແປງ. ຊາວກະສິກອນໄດ້ນຳໃຊ້ຫຼັກການຜະລິດແບບ ລວມໝູ່ ເພື່ອເຈລະຈາຕໍ່ລອງໃນການຊື້ຂາຍຜົນຜະລິດກັບພໍ່ຄ້າ. ຊຶ່ງການປ່ຽນແປງດັ່ງກ່າວນັ້ນຊາວ ກະສິກອນຈະມີການຈັດການແນວໃດກັບຊີວິດການເປັນຢູ່ ແລະ ສະພາບທາງພື້ນທີ່.

[1] ສູນຄົ້ນຄວ້ານະໂຍບາຍ ກະສິກຳ ແລະ ປ່າໄມ້, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (NAFRI)

[2] ແຜນງານໂຄງການ Catch-Up, NAFRI-IRD-CIFOR

[3] ສະຖາບັນຄົ້ນຄວ້າ ເພື່ອການພັດທະນາ (IRD), ສູນຄົ້ນຄວ້າປ່າໄມ້ ນາໆຊາດ (CIFOR)

Impact of maize expansion on household economy and production systems in northern Lao PDR.

Case studies in Xiengkhor district, Huaphan province and in Kham and Nonghet district, Xiengkhouang province.

Anousith Keophosay[1], Julien Viau[2], Etienne Jobard[2], Guillaume Lestrelin[2,3], Jean-Christophe Castella[2,3]

Abstract

For many years, farmers in remote upland areas of northern Laos just produced rice for self consumption. The production surpluses were bartered against other consumption goods or sold in the market to get some cash. Beside, farmers traditionally planted secondary crops on sloping land such as cassava or maize to feed small livestock such as pig, duck, and chicken. At present, upland agriculture is in transition from subsistence to intensified commercialized production. The rapid expansion of hybrid maize crop illustrates this major shift, leading to increased farmers' income and reduced poverty. However, current maize-based production systems may not be sustainable, neither ecologically nor economically.

In 2009 and 2010, we studied the changes in landscapes and livelihood systems triggered by maize expansion in Xiengkhor district in Huaphan province and Kham and Nonghet districts in Xiengkhouang province. Since 2005, maize had spread in these districts pushed by government policies and investment in infrastructures and pulled by the growing Vietnamese market. The study showed that maize was adopted by all households, independently of their economic status. The landscapes mosaics have gradually homogenize as maize replaced upland rice shifting cultivation system at the bottom of the hill sides and then progressed upwards towards the hill tops.

Economic analyzes showed that the rapid expansion of agricultural land devoted to maize was the main source of income increase. In Xiengkhor district, the absence of fallow or fertilization in permanent maize cropping system gradually leads to land degradation (fertility loss and soil erosion) and to yield decline. Farmers are conscious of this downward

trend but did not find any alternative so far, as the cropping system is still profitable. In the two districts of Xieng Khouang province, the rapid mechanization of land preparation and use of herbicide prefigure the changes that may happen in Xiengkhor district in the coming years.

Maize spread had a tremendous impact on the local communities, widening farmer's differentiation and changing social networks in favor of powerful middlemen and traders. The widespread use of credit for consumption or production and the high variations in commodity prices have changed their economic environment. Farmers adapted their collective rules and negotiated trade arrangements with new stakeholders. New local institutions are emerging. How local farmers cope with these changes will determine to a large extent the future of their livelihood systems.

---

[1] Agriculture and Forestry Policy Research Centre (AFPRC), National Agriculture and Forestry Research Institute (NAFRI), Vientiane, Lao PDR

[2] Catch-Up Program (Comprehensive Analysis of Trajectories of Change in the Uplands), NAFRI-IRD-CIFOR, Vientiane, Lao PDR

[3] Institut de Recherche pour le Développement (IRD, France), Center for International Forestry Research (CIFOR, Indonesia)

1. ພາກສະເໜີ

ການປູກສາລີ ກໍ່ເປັນຂະແໜງການຜະລິດກະສິກຳໜຶ່ງທີ່ສຳຄັນ ໃນການສ້າງລາຍຮັບໃຫ້ຊາວກະສິກອນໃນທົ່ວໂລກ ແລະ ຍັງປັນການຊ່ວຍສະໜັບສະໜູນໃຫ້ການປູກພືດ ມີຄວາມຍືນຍົງ. ນອກຈາກນີ້, ການຜະລິດສາລີຍັງມີຄວາມສຳຄັນຕໍ່ຂະແໜງອຸດສະຫະກຳ ຜະລິດອາຫານສັດເຊິ່ງເຫັນໄດ້ວ່າ 78% ຂອງຜົນຜະລິດສາລີແມ່ນນຳໃຊ້ເຂົ້າໃນການລ້ຽງສັດ ແລະ ຈຳນວນໜຶ່ງ ແມ່ນ ໃຊ້ ເພື່ອ ເປັນ ອາ ຫານ ບໍ ລິ ໂພ ກ ໃນ ປັ ດ ຈຸ ບັ ນ, ເນື້ອ ທີ່ ປູ ກ ສາ ລີ ທັ ງ ໝົ ດ ໃນ ທົ່ ວ ໂ ລ ກ ມີ ປະ ມານ 140 ລ້ານ ເຮັ ກ ຕາ, ສາ ມາ ດ ໃ ຫ້ ຜົ ນ ຜະ ລິ ດ ທັ ງ ໝົ ດ ປະ ມານ 600 ລ້ານ ໂ ຕນ ຕໍ່ ລະ ດູ ການ ຜະ ລິ ດ. ເຊັ່ ນ ດ ຽ ວ ກັ ບ ການ ຜະ ລິ ດ ສາ ລີ ໃ ນ ປະ ເ ທ ດ ລາ ວ ກໍ່ ເ ປັ ນ ຂະ ແ ໜ ງ ການ ໜຶ່ ງ ທີ່ ມີ ຄ ວ າ ມ ສ ຳ ຄັ ນ, ຈ າ ກ ກ ານ ຄ ິ ດ ໄ ລ່ ລ າ ຍ ຮ ັ ບ ລ ວ ມ ຍ ອ ດ ຜ ະ ລ ິ ດ ຕ ະ ພ ັ ນ ແ ຫ ່ ງ ຊ າ ດ ລ າ ຍ 80% ແ ມ່ ນ ໄ ດ້ ມ າ ຈ າ ກ ຜ ົ ນ ຜ ະ ລ ິ ດ ທ າ ງ ກ ານ ກ ະ ສ ິ ກ ຳ. ແ ຕ່ ຖ້ າ ທ ຽ ບ ໃ ສ່ ເ ນ ື້ ອ ທ ີ່ ທ ີ່ ເ ໝ າ ະ ສ ົ ມ ໃ ນ ກ ານ ທ ຳ ກ ານ ຜ ະ ລ ິ ດ ກ ະ ສ ິ ກ ຳ ແ ລ້ ວ ແ ມ່ ນ ຍ ັ ງ ຈ ຳ ກ ັ ດ ເ ຊ ິ ່ ງ ມ ີ ພ ຽ ງ 4% ຂ ອ ງ ເ ນ ື້ ອ ທ ີ່ ປ ະ ເ ທ ດ ແ ລ ະ ເ ນ ື້ ອ ທ ີ່ ທ ີ່ ນ ຳ ໃ ຊ້ ເ ຂ ົ້ າ ໃ ນ ກ ານ ປ ູ ກ ພ ືດ ກ ໍ ່ ມ ີ ພ ຽ ງ ແ ຕ ່ 0.3%. ໃ ນ ນ ັ ້ ນ ກ ານ ປ ູ ກ ສ າ ລ ີ ກ ໍ ່ ເ ປ ັ ນ ໜ ຶ ່ ງ ໃ ນ ກ ິ ດ ຈ ະ ກ ຳ ທ ີ່ ສ ຳ ຄ ັ ນ ໃ ນ ກ ານ ປ ູ ກ ພ �d ແ ລ ະ ອ າ ດ ຈ ະ ມ ີ ຄ ວ າ ມ ແ ຕ ກ ຕ ່ າ ງ ກ ັ ນ ທ າ ງ ດ ້ າ ນ ຮ ູ ບ ແ ບ ບ ການ ຜ ະ ລ ິ ດ ກ ໍ ່ ຄ ື ກ ານ ໝ ູ ນ ໃ ຊ້ ເ ຕ ັ ກ ນ ິ ກ ຢ ູ່ ໃ ນ ແ ຕ ່ ລ ະ ເ ຂ ດ ຂ ອ ງ ລ າ ວ, ໂ ດ ຍ ສ ະ ເ ພ າ ະ ແ ມ່ ນ ໃ ນ ເ ຂ ດ ເ ມ ື ອ ງ ຊ ຽ ງ ຄ ້ ໍ ແ ຂ ວ ງ ຫ ົ ວ ພ ັ ນ ແ ລ ະ ເ ມ ື ອ ງ ຄ ຳ, ເ ມ ື ອ ງ ໜ ອ ງ ແ ຮ ດ ແ ຂ ວ ງ ຊ ຽ ງ ຂ ວ າ ງ. ເ ຊ ິ ່ ງ ທ ັ ງ ສ ອ ງ ເ ຂ ດ ນ ີ້ ແ ມ່ ນ ມ ີ ຄ ວ າ ມ ແ ຕ ກ ຕ ່ າ ງ ກ ັ ນ ທ າ ງ ດ ້ າ ນ ປ ັ ດ ໄ ຈ ການ ຜ ະ ລ ິ ດ, ສ ະ ພ າ ບ ແ ວ ດ ລ ້ ອ ມ, ການ ຊ ຸ ກ ຍ ູ້ ສ ິ ່ ງ ເ ສ ີ ມ ແ ລ ະ ການ ນ ຳ ໃ ຊ້ ເ ຕ ັ ກ ນ ິ ກ ຂ ອ ງ ຊ າ ວ ກ ະ ສ ິ ກ ອ ນ ພ າ ຍ ໃ ນ ທ້ ອ ງ ຖ ິ ່ ນ.

ໃ ນ ປ ີ 2009 ທ ີ່ ຜ ່ າ ນ ມ າ ທ າ ງ ທ ີ ມ ງ າ ນ ໄ ດ ້ ສ ຶ ກ ສ າ ຄ ົ້ ນ ຄ ວ້ າ ກ ່ ຽ ວ ກ ັ ບ ຜ ົ ນ ກ ະ ທ ົ ບ ໃ ນ ກ ານ ຂ ະ ຫ ຍ າ ຍ ເ ນ ື້ ອ ທ ີ່ ປ ູ ກ ສ າ ລ ີ ຕ ໍ່ ສ ິ ່ ງ ແ ວ ດ ລ ້ ອ ມ, ເ ສ ດ ຖ ະ ກ ິ ດ ແ ລ ະ ສ ັ ງ ຄ ົ ມ ຢ ູ່ ເ ມ ື ອ ງ ຊ ຽ ງ ຄ ້ ໍ ແ ຂ ວ ງ ຫ ົ ວ ພ ັ ນ. ຊ ຶ ່ ງ ໄ ດ ້ ສ ຶ ກ ສ າ ເ ຖ ິ ງ ບ ັ ນ ດ າ ກ ິ ນ ໄ ກ ກ ານ ປ ູ ກ ພ ືດ ຂ ອ ງ ຊ າ ວ ກ ະ ສ ິ ກ ອ ນ ຕ ໍ່ ກ ັ ບ ລ າ ຄ າ ຜ ົ ນ ຜ ະ ລ ິ ດ ກ ະ ສ ິ ກ ຳ ທ ີ່ ບ ໍ ່ ຄ ົ ງ ທ ີ່ ແ ລ ະ ທ າ ງ ເ ລ ືອ ກ ໃ ນ ກ ານ ເ ພ ີ ມ ຄ ວ າ ມ ຫ ຼ າ ກ ຫ ຼ າ ຍ ຂ ອ ງ ການ ສ້ າ ງ ລ າ ຍ ຮ ັ ບ ຈ າ ກ ຜ ົ ນ ຜ ະ ລ ິ ດ ກ ະ ສ ິ ກ ຳ. ພ້ ອ ມ ດ ຽ ວ ກ ັ ນ ນ ີ້, ກ ໍ ່ ໄ ດ ້ ສ ຶ ກ ສ າ ເ ຖ ິ ງ ບ ັ ນ ດ າ ປ ັ ດ ໄ ຈ, ທ່ າ ແ ຮ ງ ໃ ນ ກ ານ ປ ່ ຽ ນ ແ ປ ງ ກ ານ ນ ຳ ໃ ຊ້ ເ ຕ ັ ກ ນ ິ ກ ກ ະ ສ ິ ກ ຳ ຂ ອ ງ ຊ າ ວ ກ ະ ສ ິ ກ ອ ນ ເ ພ ື່ ອ ເ ປ ັ ນ ກ ານ ຫ ຼ ີ ກ ລ້ ຽ ງ ຈ າ ກ ກ ານ ທ ຳ ລ າ ຍ ປ ່ າ ໄ ມ້ ແ ລ ະ ປ ົ ກ ປ້ ອ ງ ຮ ັ ກ ສ າ ດ ິ ນ ບ ໍ ່ ໃ ຫ້ ເ ຊ ື່ ອ ມ ໂ ຊ ມ ພ້ ອ ມ ທ ັ ງ ວ ິ ເ ຄ າ ະ ເ ຖ ິ ງ ຄ ວ າ ມ ເ ປ ັ ນ ໄ ປ ໄ ດ ້ ໃ ນ ກ ານ ພ ັ ດ ທ ະ ນ າ ແ ບ ບ ຍ ືນ ຍ ົ ງ ແ ລ ະ ການ ແ ກ້ ໄ ຂ ບ ັ ນ ຫ າ ຄ ວ າ ມ ຫ ຍ ຸ້ ງ ຍ າ ກ ຕ່ າ ງ ໆ ຢ ູ່ ໃ ນ ບ ັ ນ ດ າ ເ ມ ື ອ ງ ທ ີ່ ທ ຸ ກ ຍ າ ກ ທ ີ່ ສ ຸ ດ ຂ ອ ງ ສ ປ ປ ລ າ ວ.

ເ ຂ ດ ເ ມ ື ອ ງ ຄ ຳ ແ ລ ະ ເ ມ ື ອ ງ ໜ ອ ງ ແ ຮ ດ ແ ຂ ວ ງ ຊ ຽ ງ ຂ ວ າ ງ ເ ປ ັ ນ ເ ຂ ດ ໜ ຶ ່ ງ ທ ີ່ ໄ ດ ້ ຮ ັ ບ ການ ຊ ຸ ກ ຍ ູ້ ສ ິ ່ ງ ເ ສ ີ ມ ທ າ ງ ດ ້ າ ນ ການ ນ ຳ ໃ ຊ້ ເ ຕ ັ ກ ນ ິ ກ ການ ຜ ະ ລ ິ ດ ກ ະ ສ ິ ກ ຳ ແ ບ ບ ຍ �d ຍ ົ ງ ຈ າ ກ ໂ ຄ ງ ການ ນ ິ ເ ວ ດ ກ ະ ສ ິ ກ ຳ ໂ ດ ຍ ມ ີ ຈ ຸ ດ ປ ະ ສ ົ ງ ເ ພ ື່ ອ ປ ັ ບ ປ ຸ ງ ລ ະ ບ ົ ບ ການ ປ ູ ກ ພ ືດ ຂ ອ ງ ຊ າ ວ ກ ະ ສ ິ ກ ອ ນ ພ າ ຍ ໃ ນ 2 ເ ມ ື ອ ງ ດ ັ ່ ງ ກ ່ າ ວ ໃ ຫ້ ມ ີ ປ ະ ສ ິ ດ ທ ິ ພ າ ບ ສ ູ ງ ຂ ຶ້ ນ ແ ລ ະ ທ ັ ງ ເ ປ ັ ນ ການ ປ ັ ບ ປ ຸ ງ ພ ື້ ນ ທ ີ່ ທ ່ ຽ ງ ຄ ັ ງ ຫ ຼ ື ທ ່ ຽ ງ ຫ ຍ້ າ ທ ຳ ມ ະ ຊ າ ດ ທ ີ່ ມ ີ ສ ະ ພ າ ບ ດ ິ ນ ຂ້ ອ ນ ຂ້ າ ງ ເ ປ ັ ນ ກ ິ ດ (ດ ິ ນ ສ ິ້ ມ) ໃ ຫ້ ມ ີ ຄ ວ າ ມ ອ ຸ ດ ົ ມ ສ ົ ມ ບ ູ ນ ຂ ຶ້ ນ. ນ ອ ກ ນ ີ້ ກ ໍ ່ ເ ພ ື່ ອ ແ ນ ໃ ສ່ ທ ັ ນ ປ ່ ຽ ນ ຮ ູ ບ ແ ບ ບ ການ ເ ຮ ັ ດ ໄ ຮ່ ແ ບ ບ ຖ າ ງ ຈ ູ ດ ມ ານ ນ ຳ ໃ ຊ້ ເ ຕ ັ ກ ນ ິ ກ ການ ຜ ະ ລ ິ ດ ກ ະ ສ ິ ກ ຳ ແ ບ ບ ຍ ືນ ຍ ົ ງ (ນ ິ ເ ວ ດ ກ ະ ສ ິ ກ ຳ) ແ ລ ະ ເ ພ ີ ມ ຄ ວ າ ມ ຫ ຼ າ ກ ຫ ຼ າ ຍ ໃ ນ ການ ປ ູ ກ ພ ືດ ເ ປ ັ ນ ສ ິ ນ ຄ້ າ ໂ ດ ຍ ສ ະ ເ ພ າ ະ ແ ມ່ ນ ການ ປ ູ ກ ສ າ ລ ີ ເ ພ ື່ ອ ເ ປ ັ ນ ການ ຮ ັ ບ ປ ະ ກ ັ ນ ໃ ຫ້ ມ ີ ຄ ວ າ ມ

ຍືນຍົງສຳລັບລະບົບການປູກພືດ ໃນເຂດເປົ້າໝາຍ ສຶກສາຄົ້ນຄວ້າ. ເນື່ອງຈາກ ເມືອງຄຳເຂດລຸ່ມ ແລະ ເຂດ ເມືອງໜອງແຮດ ເປັນເຂດທີ່ມີລັກສະນະພູມອາກາດຮ້ອນຊຸ່ມ, ດິນຂ້ອນຂ້າງມີຄວາມອຸດົມສົມບູນດີອັນເປັນເງື່ອນໄຂທີ່ອຳນວຍຄວາມສະດວກໃນການປູກພືດເຂດເນີນສູງ ທີ່ເປັນສິນຄ້າຫຼາກຫຼາຍຊະນິດ ເຊັ່ນ: ການປູກໄມ້ໃຫ້ໝາກ ແລະ ພືດຜັກອື່ນໆ.

2. ຈຸດປະສົງ

ຈຸດປະສົງ ໃນການສຶກສາຄົ້ນຄວ້າຄັ້ງນີ້ ແມ່ນເພື່ອປະເມີນຜົນກະທົບຈາກການຂະຫຍາຍເນື້ອທີ່ປູກສາລີ ທີ່ມີຕໍ່ເສດຖະກິດຄອບຄົວ ແລະ ການປ່ຽນແປງລະບົບການຜະລິດກະສິກຳຢູ່ເຂດພາກເໜືອຂອງລາວ. ພ້ອມດຽວກັນນີ້, ເພື່ອສຶກສາເຖິງຂໍ້ຄົງຄ້າງ ແລະ ທ່າແຮງຕ່າງໆໃນການຂະຫຍາຍເນື້ອທີ່ປູກສາລີຢູ່ໃນສອງເຂດດັ່ງກ່າວ.

3. ວິທີການ

ທາງທີມງານໄດ້ສຶກສາ ແລະ ທົບທວນຂໍ້ມູນມືສອງຈາກບົດລາຍງານວິຊາການຕ່າງໆ ຂອງໂຄງການນິເວດກະສິກຳ ແລະ ສຶກສາບັນດາຂໍ້ມູນທີ່ມີກ່ຽວຂ້ອງກັບເຂດພື້ນທີ່ເປົ້າໝາຍ ນອກຈາກນີ້ກໍ່ຍັງໄດ້ປຶກສາຫາລືນຳພະນັກງານເມືອງ ແລະ ອຳນາດການປົກຄອງບ້ານຈັດກຸ່ມສົນທະນາກ່ຽວກັບສະພາບລວມຂອງບ້ານ, ປະຫວັດຄວາມເປັນມາຂອງບ້ານ ຕັ້ງແຕ່ອະດີດຈົນເຖິງປັດຈຸບັນ ແລະ ສະພາບການປ່ຽນແປງຮູບແບບການຜະລິດກະສິກຳພາຍໃນບ້ານ.

ເກັບກຳຂໍ້ມູນທາງດ້ານສະຖິຕິ ໂດຍການນຳໃຊ້ແບບສອບຖາມຕົວຈິງ, ໃນເບື້ອງຕົ້ນໄດ້ນຳໃຊ້ແບບສອບຖາມ ໃນລະດັບຄົວເຮືອນ ເພື່ອທຳຄວາມເຂົ້າໃຈກ່ຽວກັບສະພາບລວມຂອງແຕ່ລະຄອບຄົວ (ຈຳນວນສະມາຊິກໃນຄອບຄົວ, ແຮງງານຕົ້ນຕໍ, ລະດັບການສຶກສາ, ເນື້ອທີ່ທຳການຜະລິດ, ຈຳນວນສັດລ້ຽງ, ຮູບແບບການຜະລິດ ແລະ ອື່ນໆ). ຫຼັງຈາກນັ້ນກໍ່ຄັດເລືອກເອົາຄອບຄົວຕົວແບບມາສຳພາດ.

4. ປັດໄຈ ແລະ ຂໍ້ຈຳກັດໃນການປູກສາລີຂອງຊາວກະສິກອນ

4.1 ປັດໄຈຜັກດັນໃຫ້ຊາວກະສິກອນປູກສາລີ

ອີງຕາມນະ�โยบายລັດຖະບານ ທີ່ແນໃສ່ສົ່ງເສີມການປູກພືດເປັນສິນຄ້າ ເພື່ອຢຸດຕິການຖາງປ່າເຮັດໄຮ່ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ ໂດຍຍາດແຍ້ງເອົາທຶນຊ່ວຍເຫຼືອ ແລະ ການສະໜັບສະໜູນຈາກໂຄງການຕ່າງໆ ມາຊຸກຍູ້ສົ່ງເສີມຊາວກະສິກອນ ພ້ອມທັງການຊຸກຍູ້ສົ່ງເສີມການນຳໃຊ້ເຕັກນິກ ຈາກທາງຫ້ອງການສົ່ງເສີມກະສິກຳ ແລະ ປ່າໄມ້ ເມືອງ ເພື່ອຫັນປ່ຽນຮູບແບບການຜະລິດກະສິກຳ ແບບດັ່ງເດີມມາເປັນການຜະລິດເປັນສິນຄ້າ ໂດຍການນຳໃຊ້ເຕັກນິກອັນໃໝ່ ເພື່ອຍົກສູງສະມັດຕະພາບ. ລວມເຖິງບັນດາໂຄງການຕ່າງໆ, ການສະໜອງສິນເຊື່ອຈາກທາງທະນາຄານ ກໍ່ເປັນປັດໄຈຫຼັກ ທີ່ເຮັດໃຫ້ຊາວກະສິກອນສົນໃຈ ແລະ ມີການຂະຫຍາຍເນື້ອທີ່ປູກສາລີເປັນສິນຄ້າເພື່ອສ້າງລາຍຮັບເຂົ້າສູ່ຄອບຄົວ.

ໃນປະຈຸບັນນີ້, ຊາວກະສິກອນຫຼາຍຄອບຄົວກໍ່ມີຄວາມກະຕືລືລົ້ນ ແລະ ໃຫ້ຄວາມສົນໃຈ

ເຂົ້າຮ່ວມທົດລອງເຕັກນິກອັນໃໝ່ ເພື່ອເປັນການນຳເອົາຄວາມຮູ້ອັນໃໝ່ເຂົ້າມານຳໃຊ້, ປັບປຸງ ແລະ ພັດທະນາຮູບແບບການຜະລິດຂອງຕົນໃຫ້ມີຄວາມຊຳນິຊຳນານ ໃຫ້ກາຍເປັນຄອບຄົວ ຕົວແບບໃນການຜະລິດ. ເຖິງຢ່າງໃດກໍ່ຕາມ, ອີງຕາມລັກສະນະຄວາມແຕກຕ່າງ ທາງດ້ານພື້ນທີ່ ຊຶ່ງໃນບາງເຂດກໍ່ບ່ອນຈຳນວຍ ໃຫ້ແກ່ການປູກພືດເປັນສິນຄ້າ ແຕ່ຊາວກະສິກອນ ກໍ່ໄດ້ຫັນປ່ຽນເອົາໃຈໃສ່ກິດຈະກຳການລ້ຽງສັດ ທົດແທນ ຊຶ່ງມັນໄດ້ສະແດງໃຫ້ເຫັນວ່າ ຊາວກະສິກອນພາຍໃນທ້ອງຖິ່ນ ໄດ້ມີຄວາມເອົາໃຈການຜະລິດໃຫ້ດີ ຂຶ້ນເທື່ອລະກ້າວ. ປະກອບກັບໃນປີ 2003, ໂຄງການຫຼຸດຜ່ອນຄວາມທຸກຍາກ ກໍ່ໄດ້ເຂົ້າມາປັບປຸງເສັ້ນທາງໃຫ້ດີຂຶ້ນ ແລະ ທັງເປັນການອຳນວຍຄວາມສະດວກ ໃຫ້ນັກລົງທຶນເຂົ້າມາລົງທຶນ (ນັກລົງທຶນຫວຽດນາມ) ພ້ອມທັງຊຸກຍູ້ສິ່ງເສີມໃນຫຼາຍຂະແໜງການ ເປັນຕົ້ນແມ່ນຂະແໜງການປ່ອຍສິນເຊື່ອ ແນວພັນສາລີໃຫ້ແກ່ຊາວກະສິກອນ ທີ່ສົນໃຈປູກສາລີ, ຂະແໜງການເກັບຊື້ຜົນຜະລິດສາລີ. ສຳລັບຊາວກະສິກອນພາຍໃນກຸ່ມບ້ານນາຕອງ ເມືອງຊຽງຄໍ້ ແຂວງຫົວພັນ ທີ່ໄດ້ຮັບການຊ່ວຍເຫຼືອຈາກທາງໂຄງການ Oxfam Hongkong ຊຶ່ງເປັນໂຄງການພັດທະນາ ໜຶ່ງທີ່ໄດ້ຈັດຕັ້ງປະຕິບັດວຽກງານມາຕັ້ງແຕ່ປີ 2007. ນອກຈາກນີ້, ຊາວກະສິກອນພາຍໃນທ້ອງຖິ່ນ ຍັງໄດ້ຮັບການຊ່ວຍເຫຼືອຈາກນັກລົງທຶນຫວຽດນາມ ໂດຍການເຂົ້າຮ່ວມກິດຈະກຳການຄົ້ນຄວ້າທົດລອງປູກສາລີພັນນຳບໍລິສັດ. ພາຍຫຼັງສຳເລັດການເຂົ້າຮ່ວມກິດຈະກຳທົດລອງນຳບໍລິສັດແລ້ວ ກໍ່ເຮັດໃຫ້ເຂົາເຈົ້າສາມາດຮຽນຮູ້ ແລະ ເຂົ້າໃຈເຖິງແນວຄວາມຄິດໃນການລິເລີ່ມດຳເນີນທຸລະກິດ ໂດຍສະເພາະ ແມ່ນການປ່ອຍແນວພັນສາລີ ໃຫ້ປະຊາຊົນບ້ານອື່ນ ໄດ້ກູ້ຢືມ ແລະ ເກັບຊື້ຜົນຜະລິດຂອງເຂົາເຈົ້າເອງ. ດັ່ງໃນຊ່ວງປີ 2009, ຊາວກະສິກອນພາຍໃນກຸ່ມບ້ານນາຕອງ ສາມາດລົງທຶນຊື້ແນວພັນ ເພື່ອປ່ອຍໃຫ້ກັບປະຊາຊົນພາຍໃນບ້ານອ້ອມຂ້າງໄດ້ກູ້ຢືມ. ຈາກຜົນການຈັດຕັ້ງປະຕິບັດດັ່ງກ່າວນັ້ນ ເຫັນໄດ້ວ່າຊາວກະສິກອນ ທີ່ເຄີຍເຮັດວຽກຮ່ວມກັບນັກລົງທຶນຫວຽດນາມ ສາມາດເຂົ້າເຖິງຮູບແບບວິທີການດຳເນີນທຸລະກິດຂະໜາດນ້ອຍ ແລະ ມີຄວາມຕ້ອງການຜັກດັນໃຫ້ຕົນເອງ ກາຍເປັນຜູ້ຄວບຄຸມກິດຈະການດ້ວຍຕົນເອງໃນອານາຄົດ ໂດຍບໍ່ຫວັງເພິ່ງນັກລົງທຶນຕ່າງຊາດ.

ນອກຈາກແນວພັນສາລີ ທີ່ເອົາມາຈາກນັກລົງທຶນຫວຽດນາມແລ້ວ, ຊາວກະສິກອນຈຳນວນໜຶ່ງພາຍໃນ ເມືອງຊຽງຄໍ້ ຍັງໄດ້ແນວພັນສາລີມາຈາກພີ່ນ້ອງ ຫຼື ໝູ່ເພື່ອນເພື່ອທົດລອງປູກ, ແຕ່ຫຼັງຈາກການເກັບກຽວ ເຫັນໄດ້ວ່າການປູກສາລີສາມາດສ້າງລາຍຮັບໄດ້ດີ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຄອບຄົວອື່ນໆ ພາຍໃນບ້ານມີຄວາມສົນໃຈຢາກທົດລອງປູກຫຼາຍຂຶ້ນ. ສະແດງໃຫ້ເຫັນໃນການເກັບກຳຂໍ້ມູນຈາກຕົວຢ່າງ 100 ຄອບຄົວ ເຫັນວ່າ: ນັບແຕ່ປີ 2004-2007 ຈຳນວນຕອນໄຮ່ທີ່ປູກສາລີເພີ່ມຂຶ້ນ. ເຊິ່ງປີ 2007 ມີເຖິງ 90 ຕອນ/100 ຄອບຄົວ ແລະ ຫຼຸດລົງເກືອບເຄິ່ງໜຶ່ງໃນປີ 2009 (ຮູບທີ 1). ຜົນຜະລິດສາລີກໍ່ເຊັ່ນດຽວກັນນັບແຕ່ ປີ 2004-2008 ຈຳນວນຜົນຜະລິດເພີ່ມຂຶ້ນຢ່າງກະໂດດຂັ້ນ ແລະ ສູງກວ່າໝູ່ແມ່ນໃນປີ 2008 ມີເຖິງປະມານ 700 ໂຕນ/100 ຄອບຄົວ, ແຕ່ມາໃນປີ 2009 ພັດຫຼຸດລົງເຫຼືອພຽງປະມານ 520 ໂຕນ/100 ຄອບຄົວ. ໃນຊ່ວງປີ 2007-2008 ເຖິງແມ່ນວ່າຈຳນວນຕອນໄຮ່ຈະຫຼຸດລົງ ແຕ່ຜົນຜະລິດຜັດເພີ່ມຂຶ້ນ ເນື່ອງຈາກປະຊາຊົນມີຄວາມສົນໃຈຂະຫຍາຍເນື້ອທີ່ການປູກຫຼາຍຂຶ້ນ.

ຮູບທີ 1: ວິວັດທະນາການປູກສາລີ (ຈາກການຊຸ່ມຕົວຢ່າງ 100 ຄອບຄົວ)



ເມືອງຄຳເຂດລຸ່ມ ແລະ ເຂດເມືອງໜອງແຮດ ແຂວງຊຽງຂວາງ ກໍ່ມີທ່າແຮງ ທີ່ມີຄວາມເໝາະສົມໃນການຂະຫຍາຍເນື້ອທີ່ປູກສາລີ ໂດຍສະເພາະແມ່ນ: ສະພາບພູມີອາກາດ ແລະ ດິນ, ຂ້ອນຂ້າງມີຄວາມອຸດົມສົມບູນ, ຢູ່ໃກ້ກັບຕົວເມືອງ ກໍ່ຄືສູນກາງເສດຖະກິດຂອງ ແຂວງ ລວມທັງໄດ້ຮັບການຊຸກຍູ້ສົ່ງເສີມຈາກໂຄງການ. ນອກຈາກນີ້, ເປັນເຂດທີ່ມີຄວາມສະດວກໃນການຄົມມະນາຄົມຂົນສົ່ງເພາະມີເສັ້ນທາງສະດວກ ແລະ ໃກ້ກັບຕະຫຼາດຈຳໜ່າຍ. ພ້ອມກັນນີ້ລາຍຮັບຕ່າງໆຈາກການປູກສາລີສາມາດຊ່ວຍໃຫ້ປະຊາຊົນມີຊີວິດການເປັນຢູ່ທີ່ດີຂຶ້ນເທື່ອລະກ້າວເປັນຕົ້ນວ່າ: ສາມາດປຸກສ້າງເຮືອນໃໝ່, ຊື້ພາຫະນະຮັບໃຊ້ໃນຄອບຄົວ, ສົ່ງເສີມລູກຫຼານໃຫ້ໄດ້ຮັບການສຶກສາສູງ ແລະ ມີຄວາມສາມາດໃນການຊື້ອຸປະກອນຮັບໃຊ້ຕ່າງໆທີ່ຈຳເປັນນຳອີກ. ສິ່ງຕ່າງໆເຫຼົ່ານີ້ຖືໄດ້ວ່າເປັນແຮງຈູງໃຈໃຫ້ກັບຊາວຊົນທັນມາປູກສາລີເປັນສິນຄ້ານັບມື້ນັບຫຼາຍຂຶ້ນ.

ເມືອງຄຳ ແລະ ເມືອງໜອງແຮດ ແຂວງຊຽງຂວາງ ກໍ່ເປັນເຂດເປົ້າໝາຍຄົ້ນຄວ້າທົດລອງຂອງໂຄງການນິເວດກະສິກຳ (PRONAE) ທີ່ໄດ້ລິເລີ່ມຈັດຕັ້ງປະຕິບັດມາຕັ້ງແຕ່ປີ 2003-2009. ຈຸດປະສົງຂອງທາງໂຄງການ ແມ່ນເພື່ອສະໜັບສະໜູນ ແລະ ເຜີຍແຜ່ການນຳໃຊ້ເຕັກນິກການຜະລິດກະສິກຳແບບຍືນຍົງ ຫຼື ລະບົບ DMC (Direct seedling Mulch-based Cropping systems) ເຊິ່ງເປັນລະບົບການປູກພືດທີ່ມີການກຽມດິນແບບບໍ່ໄຖພື້ນທີ່ ແລະ ການປູກພືດປົກຄຸມໜ້າດິນ ເຊິ່ງພືດທີ່ປູກນັ້ນນອກຈາກຈະ ເປັນພືດຄຸມດິນທີ່ປູກຮ່ວມກັບພືດຫຼັກແລ້ວ ກໍ່ຍັງມີເສດເຫຼືອຈາກພືດ ຫຼື ວັດສະພືດທີ່ຕາຍແລ້ວ. ດັ່ງໃນກໍລະນີການສຶກສາການປູກສາລີໃນເຂດເມືອງຄຳ ແລະ ເມືອງໜອງແຮດທີ່ທາງໂຄງການໄດ້ແນະນຳໃຫ້ຊາວກະສິກອນຮູ້ຈັກໝູນໃຊ້ເຕັກນິກດັ່ງກ່າວ ເຂົ້າໃນການຜະລິດເພາະເຕັກນິກການປູກພືດແບບບໍ່ໄຖດິນ ໂດຍນຳໃຊ້ພືດ ແລະ ເສດພືດປົກຄຸມດິນນີ້ມີຜົນດີໃນການຄວບຄຸມການເຊາະເຈື່ອນຂອງດິນ ແລະ ເພີ່ມຄວາມອຸດົມສົມໃຫ້ແກ່ດິນ ໂດຍນຳໃຊ້ຢາຂ້າຫຍ້າ

ແລະ ອຸປະກອນທີ່ນຳໃຊ້ສະດວກຕ່າງໆ ນອກຈາກນີ້ການນຳໃຊ້ເຕັກນິກການຜະລິດຂອງຊາວກະສິກອນໃນແຕ່ລະບ້ານກໍ່ມີຄວາມແຕກຕ່າງກັນເຊັ່ນ: ການນຳໃຊ້ເຕັກນິກແບບດັ່ງເດີ (ການຖາງ ແລະ ຈູດ), ການໄຖພື້ນທີ່, ການນຳໃຊ້ລະບົບ DMC ແລະ ການນຳໃຊ້ເຕັກນິກແບບປະສົມປະສານກັນແລ້ວແຕ່ເງື່ອນສະດວກຂອງໃຜລາວ. ດັ່ງນັ້ນ, ເພື່ອເປັນການສະເໜີທາງເລືອກໃນການນຳໃຊ້ເຕັກນິກຕ່າງໆໃຫ້ແກ່ຊາວກະສິກອນສາມາດປຽບທຽບກັນດັ່ງໃນຕາຕາລາງລຸ່ມນີ້:

ຕາຕະລາງທີ 1: ການຄິດໄລ່ການນຳໃຊ້ເຕັກນິກຕ່າງໆ ເພື່ອປຽບທຽບກັບການນຳໃຊ້ເຕັກນິກ DMC

ເນື້ອໃນ	ການ ຖາງ+ຈູດ	ການຖາງ+ຈູດ+ ໃຊ້ຢາຂ້າຫຍ້າ	ການຖາງ+ ຈູດ+ໄຖ	ການໄຖ	ການໄຖ+ ໃຊ້ ຢາຂ້າຫຍ້າ	ນຳໃຊ້ລະບົບ DMC
ຜົນຜະລິດ (ໂຕນ/ເຮັກຕາ)	5.3	5	4.7	5	4.5	6
ເວລາໃນການເຮັດ ວຽກ (ມື້/ເຮັກຕາ)	360	90	125	77	98	42
ລາຄາ (1,000 ກີບ/ ເຮັກຕາ)	0	495	1717	1069	549	220
ຜົນຕອບແທນຂອງ ແຮງງານ (ກີບ/ເຮັກຕາ/ມື້)	15,020	32,420	35,380	41,180	67,480	67,420
ອັດຕາສ່ວນໃນເມືອງ ຄຳເຂດລຸ່ມ ແລະ ເມືອງໜອງແຮດ	27.5	20.2	19.3	15.6	8.3	9.2

4.2 ກິດຈະກຳການຜະລິດ

ຊາວກະສິກອນ ພາຍໃນກຸ່ມບ້ານນາຕອງ ເມືອງ ຊຽງຄໍ້ ສ່ວນໃຫຍ່ແມ່ນຖືເອົາການເຮັດນາເປັນກິດຈະກຳຫຼັກພາຍໃນຄອບຄົວເພື່ອເປັນການຄຳ້ປະກັນສະບຽງອາຫານ. ເຖິງຢ່າງໃດກໍ່ຕາມ, ກິດຈະກຳການເຮັດນາ ກໍ່ຍັງບໍ່ໄດ້ຮັບຜົນດີເທົ່າທີ່ຄວນຖ້າສົມທຽບກັບພື້ນທີ່ໃນເຂດທົ່ງພຽງບ່ອນອື່ນເພາະເນື້ອທີ່ທີ່ເໝາະສົມໃຫ້ແກ່ການເຮັດນາຍັງມີຈຳກັດ ແລະ ບໍ່ພຽງພໍຕໍ່ຄວາມຮຽກຮ້ອງຕ້ອງການຂອງຊາວກະສິກອນພາຍໃນທ້ອງຖິ່ນ. ດັ່ງນັ້ນ, ຈຶ່ງເຮັດໃຫ້ຊາວກະສິກອນຈຳນວນຫຼາຍເລືອກທີ່ຈະໄປເຮັດໄຮ່ເຂົ້າ ແລະ ຫັນມາປູກພືດເປັນສິນຄ້າ ໂດຍສະເພາະແມ່ນສາລີໃຫ້ຫຼາຍຂຶ້ນ. ໃນເບື້ອງຕົ້ນກໍ່ມີການລິເລີ່ມທົດລອງປູກຖົ່ວເຫຼືອງກ່ອນຫຼັງຈາກນັ້ນ ຈຶ່ງມີການພັດທະນາປູກສາລີພັນຕາມມາເພື່ອສ້າງລາຍຮັບເຂົ້າສູ່ຄອບຄົວ.

ເພື່ອຊີ້ແຈງເຖິງເງື່ອນໄຂສິ່ງອຳນວຍຄວາມສະດວກ ແລະ ຂໍ້ຫຍຸ້ງຍາກຕ່າງໆຈາກການສຶກສາຄົ້ນຄວ້າກ່ຽວກັບການປູກສາລີຂອງຊາວກະສິກອນ ເຊິ່ງໄດ້ຊຸ່ມເອົາຕົວຢ່າງຈຳນວນ 100 ຄອບຄົວໃນເມືອງຊຽງຄໍ້ມາສຳພາດ ແລະ ເຫັນໄດ້ວ່າຄຽງຄູ່ກັບກິດຈະກຳການປູກສາລີກໍ່ຍັງມີການປູກເຂົ້າໄຮ່. ຖ້າສົມທຽບກັນແລ້ວທັງສອງກິດຈະກຳແມ່ນມີຄວາມ ແຕກຕ່າງກັນໃນແຕ່ລະຂັ້ນຕອນການຜະລິດ. ການປູກສາລີຈະໃຊ້ຈຳນວນວັນງານຫຼາຍກວ່າການປູກເຂົ້າໄຮ່ ໂດຍສະເພາະແມ່ນກິດຈະກຳການຖາງ, ການກຽມດິນ, ການເສຍຫຍ້າ ແລະ ການເກັບກ່ຽວ, ຍົກເວັ້ນແຕ່ການປູກແມ່ນຈຳນວນວັນງານເທົ່າໆກັນ (ຮູບທີ 2). ກິດຈະກຳທີ່ໃຊ້ຈຳນວນວັນງານສູງກວ່າໝູ່ແມ່ນການເສຍຫຍ້າ ເຊິ່ງການປູກສາລີຕ້ອງການວັນງານປະມານ 55 ມື້/ເຮັກຕາ ແລະ ເຂົ້າໄຮ່ປະມານ 51 ມື້/ເຮັກຕາ.ສຳລັບກິດຈະກຳທີ່ໃຊ້ຈຳນວນວັນງານໜ້ອຍກວ່າໝູ່ແມ່ນການປູກ ເຊິ່ງທັງສອງກິດຈະກຳຕ້ອງການວັນງານປະມານ 17 ມື້/ເຮັກຕາ. ສ່ວນກິດຈະກຳອື່ນຂອງການປູກເຂົ້າແມ່ນຕ້ອງການຈຳນວນວັນງານເກືອບເທົ່າໆກັນ, ຄືປະມານ 20 ມື້/ເຮັກຕາ (ການຖາງ, ການກຽມດິນ ແລະ ການເກັບກ່ຽວ), ສຳລັບສາລີ, ກິດຈະກຳການຖາງ ແລະ ການກຽມດິນກໍ່ຕ້ອງການຈຳນວນວັນງານເກືອບເທົ່າກັນປະມານ 30 ມື້/ເຮັກຕາແຕ່ສຳລັບການເກັບກ່ຽວໄດ້ໃຊ້ວັນງານສູງກວ່າຄືຢູ່ທີ່ປະມານ 37 ມື້/ເຮັກຕາ.

ຮູບທີ 2: ການປຽບທຽບວັນງານ ລະຫວ່າງການປູກສາລີ ແລະ ເຂົ້າໄຮ່ (ມື້/ເຮັກຕາ)



ຕາມຄວາມເປັນຈິງແລ້ວ, ຮູບແບບການປູກສາລີພັນກໍ່ຄ້າຍຄືກັບການປູກສາລີພື້ນເມືອງ ເນື່ອງຈາກວ່າ: ຊາວກະສິກອນພາຍໃນກຸ່ມບ້ານນາຕອງຍັງບໍ່ໄດ້ຮັບການຊຸກຍູ້ສິ່ງເສີມເຕັກນິກຈາກທາງໂຄງການໃດໆ. ການເຮັດນາກໍ່ເຊັ່ນດຽວກັນຊາວກະສິກອນຍັງນຳໃຊ້ຮູບແບບການ

ແລກປ່ຽນແຮງງານກັນ. ສຳລັບການປູກເຂົ້າໄຮ່ຂອງຊາວກະສິກອນ ບ້ານນາເດື່ອຍັງມີຈຳນວນໜຶ່ງທີ່ທຸກຍາກ, ເຂົາເຈົ້າຈຳຕ້ອງໄປຮັບจ้างทำ ການຜະລິດໃຫ້ກັບຄອບຄົວອື່ນພາຍໃນບ້ານ ຫຼື ບ້ານອື່ນໆໃນກຸ່ມບ້ານນາຕອງ ໂດຍສະເລ່ຍໄດ້ຄ່າແຮງງານພຽງແຕ່ 20,000-30,000 ກີບ/ມື້ ຫຼື ບາງຄັ້ງກໍ່ເອົາເປັນເຂົ້າໄດ້ປະມານ 5-6 ກິໂລ/ມື້ ເທົ່ານັ້ນແຕ່ເຂົາເຈົ້າ ກໍ່ຈຳເປັນຕ້ອງເຮັດ ເນື່ອງຈາກຈຳນວນສະມາຊິກໃນຄອບຄົວມີຫຼາຍແຕ່ເນື້ອທີ່ທຳການຜະລິດຈຳກັດ ແລະ ບໍ່ມີນາ.

4.3 ບັນຫາ ແລະ ຂໍ້ຈຳກັດຂອງຊາວກະສິກອນ

ໃນກຸ່ມບ້ານນາຕອງ ການສ້າງເສັ້ນທາງ ແມ່ນຖືເອົາການຕົກລົງເຫັນດີກັນຂອງປະຊາຊົນ ໝົດບ້ານກັບອຳນາດການປົກຄອງທ້ອງຖິ່ນ ໂດຍສະເລ່ຍແລ້ວ ງົບປະມານສຳລັບການສ້າງທາງ 10.5 ລ້ານກີບ ແລະ ມີຄວາມຈຳເປັນກູ້ຢືມສິນເຊື່ອກຳນົດເວລາ 3 ປີ. ຖ້າເສັ້ນທາງຫາກເປເພໃນໄລຍະເວລາດັ່ງກ່າວນັກລົງທຶນທີ່ເຂົ້າມາບ້ານຈຳເປັນຕ້ອງໄດ້ສ້ອມແປງຄືນໃຫ້ໃໝ່. ເຖິງຢ່າງໃດກໍ່ຕາມ, ດັ່ງກໍລະນີຂອງປະຊາຊົນບ້ານນາເດື່ອ ທີ່ພົບບັນຫາຫຍຸ້ງຍາກຫຼາຍ ໃນການສົ່ງເງິນສິນເຊື່ອຄືນ. ເນື່ອງຈາກປະຊາຊົນສາມາດໃຊ້ຄືນໄດ້ພຽງແຕ່2.7ລ້ານກີບທັງໆທີ່ຍັງເປັນໜີ້ສູງເຖິງ23ລ້ານກີບ. ໃນຕົ້ນປີ 2009, ໄດ້ມີນັກລົງທຶນຄົນໃໝ່ທີ່ເຂົ້າມາເຈລະຈາຕໍ່ລອງ ກັບອຳນາດການປົກຄອງບ້ານເພື່ອຕ້ອງການເຂົ້າມາລົບລ້າງໜີ້ ຊ່ວຍປະຊາຊົນພາຍໃນບ້ານ ແຕ່ມີຂໍ້ແມ້ວ່າຕ້ອງອະນຸຍາດໃຫ້ບໍລິສັດຕົນເອງແຕ່ພຽງຜູ້ດຽວເຂົ້າມາຊຸກຍູ້ສົ່ງເສີມການປູກສາລີພາຍໃນບ້ານ ແຕ່ອຳນາດການປົກຄອງບ້ານຍັງບໍ່ທັນໄດ້ຕັດສິນໃຈຕົກລົງ ເທື່ອເພາະຍັງກັງວົນ ແລະ ຢ້ານເກີດມີໜີ້ເພີ່ມຈາກນັກລົງທຶນຄົນໃໝ່.

ຄຽງຄູ່ກັບການຊຸກຍູ້ສົ່ງເສີມການນຳໃຊ້ເຕັກນິກຈາກທາງໂຄງການນິເວດກະສິກຳ, ຊາວກະສິກອນພາຍໃນ ເມືອງຄຳເຂດລຸ່ມ ແລະ ເມືອງໜອງແຮດ ກໍ່ຍັງໄດ້ຮັບການສະໜອງສິນເຊື່ອໄລຍະສັ້ນຈາກທະນາຄານສົ່ງເສີມກະສິກຳ ແລະ ທະນາຄານນະ�โยบาย ເພື່ອເປັນຕົ້ນທຶນສຳລັບການປູກພືດ ແລະ ການລ້ຽງສັດພ້ອມດຽວກັນນີ້, ອຳນາດການປົກຄອງບ້ານກໍ່ຄືຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກໍ່ໄດ້ມີການປະກອບສ່ວນຊຸກຍູ້ໃຫ້ຊາວກະສິກອນຈັດຕັ້ງເປັນກຸ່ມຜູ້ຜະລິດ ເຊັ່ນ: ກຸ່ມລ້ຽງສັດ ແລະ ກຸ່ມປູກພືດເພື່ອເປັນການຫຼຸດຜ່ອນຄວາມສ່ຽງ ໃນການຜະລິດ ແລະ ຄ່າໃຊ້ຈ່າຍຕ່າງໆ. ນອກຈາກນີ້, ຍັງເປັນການຊ່ວຍໃຫ້ກຸ່ມພາຍໃນບ້ານມີທຶນຮອນໃນການພັດທະນາເສັ້ນທາງເຂົ້າສູ່ພື້ນທີ່ທຳການຜະລິດແລະຫັນຈາກການປູກພືດແບບດັ່ງເດີມມາເປັນການຜະລິດເປັນສິນຄ້າ ໃຫ້ໄດ້ເທື່ອລະກ້າວ. ຄຽງຄູ່ກັນນັ້ນ, ກໍ່ຍັງມີຂໍ້ຈຳກັດຫຼາຍດ້ານເປັນຕົ້ນ ແມ່ນອັດຕາດອກເບ້ຍສູງຂຶ້ນຈາກການກູ້ຢືມເງິນຈາກທະນາຄານ ແລະ ໄລຍະການກູ້ຢືມກໍ່ສັ້ນ. ໃນປັດຈຸບັນຊາວກະສິກອນຫຼາຍຄອບຄົວໃນເຂດເມືອງຄຳເຂດລຸ່ມ ແລະ ເມືອງໜອງແຮດໄດ້ປະເຊີນກັບບັນຫາຄວາມຫຍຸ້ງຍາກພາຍຫຼັງທີ່ໄດ້ຮັບເງິນກູ້ຢືມຈາກທະນາຄານ ເພາະເຂົາເຈົ້າບໍ່ມີຄວາມສາມາດສົ່ງເງິນໃຫ້ຄົບຕາມກຳນົດດັ່ງທີ່ໄດ້ລະບຸໄວ້ໃນສັນຍາ.

ເຖິງຢ່າງໃດກໍ່ຕາມການຈັດຕັ້ງປະຕິບັດ ແລະ ນຳໃຊ້ເຕັກນິກນິເວດກະສິກຳ ຂອງຊາວກະສິກອນພາຍໃນທ້ອງຖິ່ນຍັງມີຂໍ້ຈຳກັດຫຼາຍຢ່າງ ເນື່ອງຈາກເຂົາເຈົ້າຍັງບໍ່ທັນເຂົ້າໃຈເຖິງເຕັກນິກ ລະອຽດຍ້ອນຄວາມຮັບຮູ້ກ່ຽວກັບການເຊື່ອມໂຊມ ຂອງສິ່ງແວດລ້ອມ ຍັງບໍ່ທັນເລິກເຊິ່ງ ແລະ ໃນ

ບາງພື້ນທີ່ທຳການຜະລິດ ກໍ່ຍັງອຸດົມສົມບູນຢູ່ຈຶ່ງ ເຮັດໃຫ້ເຂົາເຈົ້າບໍ່ເຫັນຄວາມສຳຄັນໃນການ ນຳໃຊ້ເຕັກນິກການຜະລິດກະສິກຳແບບຍືນຍົງ ຫຼາຍປານໃດ. ດັ່ງນັ້ນ, ຈຶ່ງເຮັດໃຫ້ການສົ່ງເສີມ ການນຳໃຊ້ເຕັກນິກນີ້ບໍ່ໄດ້ດີເທົ່າທີ່ຄວນ ແລະ ເຮັດໃຫ້ຊາວກະສິກອນ ສືບຕໍ່ໄຖພື້ນທີ່ຢ່າງຕໍ່ເນື່ອງ ໃນແຕ່ລະປີ.

ພາຍຫຼັງທີ່ທາງໂຄງການນິເວດກະສິກຳ ສິ້ນສຸດລົງ, ຊາວກະສິກອນພາຍໃນທ້ອງຖິ່ນຈຳ ນວນຫຼາຍ ໄດ້ຫັນກັບມານຳໃຊ້ຮູບແບບການຜະ ລິດດັ່ງເດີມ (ຖາງ ແລະ ຈູດພື້ນທີ່) ລວມເຖິງການ ໄຖດິນເພື່ອຍົກສະມັດຕະພາບຜົນຜະລິດໃຫ້ສູງ ຂຶ້ນ ໂດຍບໍ່ຄຳນຶງເຖິງຜົນກະທົບທີ່ຈະຕາມມາຕໍ່ ກັບສະພາບແວດລ້ອມ ເຊິ່ງກົດຈະກຳການໄຖດິນ ຈະທຳລາຍໂຄງສ້າງຂອງດິນ ແລະ ເຮັດໃຫ້ທາດ ອາຫານຢູ່ໃນດິນຄ່ອຍໆໝົດໄປ. ຍິ່ງໄປກວ່ານັ້ນ ຊາວກະສິກອນບາງຄອບຄົວຍັງໄຖພື້ນທີ່ຄ້ອຍ ຊັນ ອັນເປັນສາເຫດເຮັດໃຫ້ເກີດການເຊາະເຈື່ອນ ແລະ ດິນເຊື່ອມຄຸນນະພາບ. ເຖິງຢ່າງໃດກໍ່ຕາມ, ພາຍຫຼັງທີ່ໂຄງການສິ້ນສຸດລົງຊາວກະສິກອນບໍ່ມີ ຕົ້ນທຶນພຽງພໍທີ່ຈະນຳໃຊ້ເຂົ້າໃນການຜະລິດ (ຊື້ ຢາຂ້າຫຍ້າ, ອຸປະກອນ ແລະ ສິ່ງນຳເຂົ້າຕ່າງໆ).

5. ສົນທະນາ

5.1 ເມືອງຊຽງຄໍ້ ແຂວງ ຫົວພັນ

ກົດຈະກຳການເຮັດທາງໄປໄຮ່ສາລີ ຂອງ ແຕ່ກຸ່ມບ້ານ ແມ່ນມີຄວາມແຕກຕ່າງກັນເນື່ອງ ຈາກການຕັດສິນໃຈຂອງນາຍບ້ານ ບວກກັບຄວາມ ເຫັນດີເອກະພາບຂອງປະຊາຊົນແມ່ນເປັນສິ່ງ ສຳຄັນ. ສິ່ງຕ່າງໆເຫຼົ່ານີ້ສະແດງໃຫ້ເຫັນຈະແຈ້ງ ສຳລັບບ້ານຊຽງແດນ ຫຼັງຈາກທີ່ມີການຕົກລົງ ເຫັນດີກັນແລ້ວອຳນາດການປົກຄອງບ້ານຈະ ເປັນຜູ້ແບ່ງສ່ວນເສັ້ນທາງທີ່ຈະສ້າງໃຫ້ກັບຊາວ ບ້ານ ແຕ່ລະຄົວເຮືອນ ໃນໄລຍະ ເທົ່າທຽມກັນ. ການສ້າງເສັ້ນທາງໄປຫາພື້ນທີ່ທຳການຜະລິດ ເປັນການລົງທຶນ ເພື່ອຈະໃຫ້ໄດ້ຮັບຜົນປະ ໂຫຍດຈາກຜົນຜະລິດທີ່ຫຼາຍກວ່າມູນຄ່າການ ລົງທຶນ. ແຕ່ໃນບາງກຸ່ມບ້ານການສ້າງເສັ້ນທາງກໍ່ ຍັງບໍ່ມີຄວາມ ເປັນ ເອກະພາບກັນ ເນື່ອງ ຈາກ ປະ ຊາຊົນ ບາງ ຈຳ ນວ ນ ພາ ຍ ໃ ນ ບ້ານ ບໍ່ ມີ ຄ ວ າ ມ ເ ຫັ ນ ດິ ນ ຖ ຳ ອ ຳ ນ າ ດ ກ ານ ປ ົ ກ ຄ ອ ງ ບ້ ານ ແ ລ ະ ສ ິ ງ ສ ່ ວ ນ ຫ ຼ າ ຍ , ຊ ຶ ່ ງ ພ າ ໃ ຫ້ ເ ກ ີ ດ ຄ ວ າ ມ ຂ ັ ດ ແ ຍ ່ ງ ກ ັ ນ .

ກ່ຽວກັບລາຄາສາລີ ຜູ້ຜະລິດກໍ່ຄືປະຊາ ຊົນ ໝົດ ທຸ ກ ຄົ ນ ຖືວ່ າ ມີ ຄ ວ າ ມ ສ ຳ ຄ ັ ນ ຍິ ່ ງ ເ ພ າ ະ ລ າ ຄ າ ຜ ົ ນ ຜ ະ ລ ິ ດ ຂ ອ ງ ສ າ ລ ີ ບ ໍ ່ ມ ີ ຄ ວ າ ມ ໝ ັ ້ ນ ຄ ົ ງ ເ ຊ ັ ່ ນ : 400, 800, 1000 ແ ລ ະ 1200 ກ ີ ບ/ກ ິ ໂ ລ , ປ ະ ຊ າ ຊ ົ ນ ມ ີ ຄ ວ າ ມ ຄ າ ດ ຫ ວ ັ ງ ຢ າ ກ ຂ າ ຍ ຜ ົ ນ ຜ ະ ລ ິ ດ ໃ ນ ລ າ ຄ າ ທ ີ ່ ສ ູ ງ , ແ ຕ ່ ຖ ້ າ ຫ າ ກ ລ າ ຄ າ ຕ ົ ກ ຕ ່ ຳ ລ ົ ງ ເ ຖ ິ ງ 400 ກ ີ ບ/ກ ິ ໂ ລ ມ ັ ນ ກ ໍ ່ ເ ຮ ັ ດ ໃ ຫ້ ປ ະ ຊ າ ຊ ົ ນ ມ ີ ຄ ວ າ ມ ຫ ຍ ້ ທ ້ ໃ ນ ການ ທ ຳ ການ ຜ ະ ລ ິ ດ . ເ ຖ ິ ງ ຢ ່ າ ງ ໃ ດ ກ ໍ ່ ຕ າ ມ , ຖ ້ າ ທ ຽ ບ ກ ານ ປ ູ ກ ສ າ ລ ີ ກ ັ ບ ກ ານ ລ ້ ຽ ງ ສ ັ ດ ແ ລ ້ ວ ປ ະ ຊ າ ຊ ົ ນ ສ ່ ວ ນ ໃ ຫ ຍ ່ ກ ໍ ່ ຍ ັ ງ ມ ີ ຄ ວ າ ມ ສ ົ ນ ໃ ຈ ໃ ນ ການ ປ ູ ກ ສ າ ລ ີ ຫ ຼ າ ຍ ກ ວ ່ າ ຄ ຽ ງ ຄູ ່ ກ ັ ບ ການ ຈ ັ ດ ຕ ັ ້ ງ ປ ະ ຕ ິ ບ ັ ດ ບ ັ ນ ດ າ ສ ອ ງ ກ ົ ດ ຈ ະ ກ ຳ ດ ັ ່ ງ ກ ່ າ ວ . ກ ໍ ່ ເ ຮ ັ ດ ໃ ຫ້ ຊ າ ວ ກ ະ ສ ິ ກ ອ ນ ບ ໍ ່ ສ າ ມ າ ດ ປ ່ ອ ຍ ປ ະ ການ ເ ຮ ັ ດ ໄ ຮ ່ ເ ຂ ົ້ າ ທ ີ ່ ເ ຂ ົ າ ເ ຈ ົ້ າ ເ ຄ ີ ຍ ເ ຮ ັ ດ ຜ ່ ານ ມ າ ເ ພ າ ະ ການ ເ ຮ ັ ດ ໄ ຮ ່ ເ ຂ ົ້ າ ມ ັ ນ ເ ປ ັ ນ ການ ຄ ້ ຳ ປ ະ ກ ັ ນ ເ ຂ ົ້ າ ກ ິ ນ ໃ ນ ຄ ອ ບ ຄ ົ ວ .

5.2 ເມືອງຄຳເຂດລຸ່ມ ແລະ ເມືອງໜອງແຮດ ແຂວງຊຽງຂວາງ

ເງື່ອນໄຂໃນການປ່ຽນແປງລະບົບການຜະລິດກະສິກຳຕ່າງໆ ໂດຍສະເພາະແມ່ນ: ມູນຄ່າການລົງທຶນ, ຄວາມເຂົ້າໃຈກ່ຽວກັບເຕັກນິກ ແລະ ຜົນໄດ້ຮັບຈຶ່ງເປັນປັດໄຈຕົ້ນຕໍໃນການຕັດສິນໃຈລົງມືທຳການຜະລິດຂອງຊາວກະສິກອນ. ເຖິງແມ່ນວ່າການປູກສາລີ ຈະສາມາດສ້າງລາຍຮັບທາງດ້ານເສດຖະກິດໄດ້ດີກໍ່ຕາມ, ແຕ່ມັນກໍ່ຍັງມີຈຸດອ່ອນຕໍ່ສະພາບແວດລ້ອມເຊັ່ນດຽວກັນ. ເນື້ອທີ່ການປູກສາລີພັນຢູ່ ເມືອງຄຳເຂດລຸ່ມ ແລະ ເຂດເມືອງໜອງແຮດ ມີການເພີ່ມຂຶ້ນຢ່າງໄວວາ ເພາະວ່າຊາວກະສິກອນສ່ວນຫຼາຍຍັງບໍ່ທັນເຂົ້າໃຈກ່ຽວກັບການເຊື່ອມໂຊມຂອງສະພາບແວດລ້ອມໄດ້ດີເທື່ອ, ສະແດງວ່າໃນເມືອງຄຳເຂດລຸ່ມມີການກຽມດິນດ້ວຍການໄຖແບບຕໍ່ເນື່ອງກັນຫຼາຍປີເພື່ອເພີ່ມເນື້ອທີ່ການປູກ ແລະ ຜົນຜະລິດ, ບາງຄອບຄົວກໍ່ມີການໄຖພື້ນທີ່ທີ່ເປັນເຂດຄ້ອຍຊັນອັນເປັນສາເຫດເຮັດໃຫ້ທາດອາຫານໃນດິນຖືກເຊາະລ້າງ, ສະມັດຕະພາບຂອງດິນເຊື່ອມໂຊມລົງ ແລະ ເຮັດໃຫ້ບໍ່ມີຄວາມຍືນຍົງ ໃນລະບົບການປູກພືດ. ສະນັ້ນ ທາງເລືອກທີ່ອາດເປັນໄປໄດ້ ໃນການຂະຫຍາຍເນື້ອທີ່ການປູກສາລີໃນຕໍ່ໜ້າເຮົາຄວນມີການຝຶກອົບຮົມກ່ຽວກັບການນຳໃຊ້ເຕັກນິກການຜະລິດກະສິກຳແບບຍືນຍົງໃຫ້ກັບປະຊາຊົນ, ຫຼີກລ້ຽງການໄຖພື້ນທີ່ເຂດຄ້ອຍຊັນ ແລະ ເພີ່ມຄວາມຮູ້ທາງດ້ານສິ່ງແວດລ້ອມໃຫ້ແກ່ຊາວກະສິກອນ ໂດຍການລົງໃກ້ສິດຕິດແທດຈາກນັກວິຊາການ, ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ກໍ່ຄືອຳນາດການປົກຄອງບ້ານໃນການຊີ້ນຳ-ນຳພາປະຊາຊົນຈັດຕັ້ງປະຕິບັດ. ນອກຈາກນີ້ກໍ່ຕ້ອງຊອກຫາແຫຼ່ງທຶນ ໃຫ້ຊາວກະສິກອນໄດ້ກູ້ຢືມ ຫຼື ສະເໜີໃຫ້ທາງທະນາຄານປ່ອຍເງິນກູ້ໃນອັດຕາດອກເບ້ຍທີ່ເໝາະສົມ ແລະ ແກ່ຍາວໄລຍະເວລາໃນການສົ່ງເງິນຄືນ, ຖ້າເປັນສິນເຊື່ອສຳລັບການລ້ຽງສັດໃຫຍ່ ຄວນຢູ່ໃນລະຫว่ວ່ານ (3-5 ປີ) ເນື່ອງຈາກວ່າບາງຄອບຄົວ ທີ່ບໍ່ມີເນື້ອທີ່ທຳການຜະລິດພຽງພໍ, ເຂົາເຈົ້າກໍ່ມີຄວາມສົນໃຈໃນການຈັດຕັ້ງກັນເປັນກຸ່ມລ້ຽງສັດ.

6. ສະຫຼຸບ

ການປູກສາລີ ຖືໄດ້ວ່າເປັນກິດຈະກຳໜຶ່ງທີ່ສຳຄັນໃນການສ້າງລາຍຮັບທາງດ້ານເສດຖະກິດ ແລະ ເພື່ອການຫັນປ່ຽນຮູບແບບການຜະລິດກະສິກຳແບບດັ່ງເດີມມາເປັນການຜະລິດກະສິກຳເປັນສິນຄ້າເທື່ອລະກ້າວ. ເຫັນໄດ້ວ່າຊາວກະສິກອນຈຳນວນຫຼວງຫຼາຍກໍ່ມີຄວາມກະຕືລືລົ້ນ ແລະ ໃຫ້ຄວາມສົນໃຈໃນການປູກສາລີ. ແຕ່ສິ່ງສຳຄັນແມ່ນຈະເຮັດແນວໃດໃຫ້ຊາວກະສິກອນສາມາດຜະລິດໄດ້ ແລະ ຮັບປະກັນໃຫ້ມີຄວາມຍືນຍົງ. ເນື່ອງຈາກວ່າໃນການຂະຫຍາຍເນື້ອທີ່ປູກສາລີ ແມ່ນມີລາຍຮັບດີເຮັດໃຫ້ຊາວກະສິກອນມີຄວາມສົນໃຈ ແລະ ເອົາໃຈໃສ່ເພີ່ມຜົນຜະລິດໃຫ້ໄດ້ຫຼາຍເທົ່າທີ່ຈະເຮັດໄດ້ໃນແຕ່ລະປີ. ຈາກການສຶກສາຄົ້ນຄ້ວາຢູ່ທັງສອງເຂດ (ແຂວງຫົວພັນ ແລະ ແຂວງຊຽງຂວາງ), ສາມາດຊີ້ໃຫ້ເຫັນວ່າ: ການປູກສາລີພັນເຮັດໃຫ້ຊາວກະສິກອນມີລາຍຮັບດີ ແລະ ຊີວິດການເປັນຢູ່ທີ່ດີຂຶ້ນ, ເຫັນໄດ້ຈາກຊາວກະສິກອນ

ໃນແຕ່ລະຄອບຄົວມີວັດຖຸອຸປະກອນ ແລະ ພາຫະນະຮັບໃຊ້ໃນຄອບຄົວຫຼາຍຂຶ້ນ, ສາມາດສົ່ງລູກຫຼານໃຫ້ໄດ້ຮັບການສຶກສາສູງ, ສາມາດປຸກເຮືອນໃໝ່ທີ່ມີຄວາມໝັ້ນຄົງກວ່າເກົ່າ. ແຕ່ຄຽງຄູ່ກັບການປ່ຽນແປງທີ່ດີເຫຼົ່ານັ້ນກໍ່ຍັງມີບາງຈຸດອ່ອນທີ່ຕາມມາເປັນຕົ້ນແມ່ນ: ເນື້ອທີ່ປ່າເລົ່າຫຼຸດລົງ, ເນື້ອທີ່ປ່າໄມ້ຈຳນວນຫຼາຍຖືກຖາງຊະຊາຍເພື່ອທຳການຜະລິດ ແລະ ເຮັດໃຫ້ຄຸນນະພາບຂອງທີ່ດິນເຊື່ອມໂຊມລົງ. ແຕ່ເຖິງຢ່າງໃດກໍ່ຕາມ, ຫຼັງຈາກທີ່ມີຫຼາຍໂຄງການເຂົ້າມາຊ່ວຍຊຸກຍູ້ສົ່ງເສີມພາຍໃນທ້ອງຖິ່ນ, ກໍ່ເຫັນໄດ້ວ່າຊາວກະສິກອນມີຄວາມຕື່ນຕົວ, ຊາບຊຶມຮູບແບບໃນການຜະລິດ ແລະ ການຫັນປ່ຽນເຕັກນິກທີ່ມີຄວາມເໝາະສົມຂອງບັນດາໂຄງການກໍ່ຄືຈາກ ທາງຫ້ອງການກະສິກຳ ແລະ ປ່າໄມ້ເພື່ອຮັບປະກັນໃຫ້ມີຄວາມຍືນຍົງດ້ານການຜະລິດ ກະສິກຳ.

ເອກະສານອ້າງອີງ

ຄຳແກ້ວ ປັນຍາສິຣິ. 2004. ເຕັກນິກນິເວດກະສິກຳເສັ້ນທາງ ກ້າວໄປສູ່ການເຮັດກະສິກຳແບບໝັ້ນຄົງຍືນນານ. ບົດລາຍງານ NAFRI, ນະຄອນຫຼວງວຽງຈັນ ສປປ ລາວ, 8-10. ໂຄງການນິເວດກະສິກຳ (PRONAE). 2008. ການທົດສອບສາທິດ ຂອງການສ້າງສວນສາທິດກ່ຽວກັບການປູກພືດຕ່າງໆ, ບົດລາຍງານ,36-39.

ດຣ. ບຸນຖອງ ບົວຫອມ. 2005. ການຫັນປ່ຽນລະບົບການຜະລິດສູ່ການຜະລິດ ເປັນສິນຄ້າ. ວາລະສານກະສິກຳ ແລະ ປ່າໄມ້, ສະຖາບັນຄົ້ນຄວ້າກະສິກຳແລະ ປ່າໄມ້ແຫ່ງຊາດ, 65.

PRONAE. 2003. Diagnostic agro-socio-économique de la zone d'intervention du projet : Districts de Pek, Kham et Nonghet. CIRAD and NAFRI, Vientiane.

ຮູບທີ 3: ການຂະຫຍາຍເນື້ອທີ່ປູກສາລີ ຂອງຊາວກະສິກອນ

ຮູບທີ 4: ຜົນທີ່ໄດ້ຮັບຈາກກິດຈະກຳການປູກສາລີຂອງຊາວກະສິກອນ